ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການ

ເລກທີ: 911 /ປທສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ: 26 ພຶດສະພາ 2020

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະ ຫ້າງຮ້ານຕ່າງໆ.

ເລື່ອງ: ການນຳເຂົ້າ, ການຂຶ້ນທະບຽນນຳໃຊ້ອຸປະກອນສື່ສານລະບົບໄຟນີ້.

- ອີງຕາມ ກົດໝາຍ ວ່າດ້ວຍ ຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ສະບັບເລກທີ 654/ປທສ, ລົງວັນທີ 28 ມີນາ 2016.

ໃນປັດຈຸບັນນີ້, ເຫັນວ່າ ການນຳເຂົ້າ ແລະ ການນຳໃຊ້ອຸປະກອນສື່ສານລະບົບໄຟນີ້ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະ ຫ້າງຮ້ານຕ່າງໆຈຳນວນໜຶ່ງ ຍັງບໍ່ໄດ້ຮັບການອະນຸຍາດນຳໃຊ້ຕາມລະບຽບກົດໝາຍ.

ດັ່ງນັ້ນ, ເພື່ອເຮັດໃຫ້ວຽກງານການຄຸ້ມຄອງການນຳໃຊ້ອຸປະກອນສື່ສານລະບົບໄຟນີ້ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈຶ່ງອອກແຈ້ງການດັ່ງນີ້:

## I. ການນຳເຂົ້າ.

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະ ຫ້າງຮ້ານຕ່າງໆ ທີ່ຕ້ອງການນຳເຂົ້າອຸປະກອນສື່ສານລະບົບໄຟນີ້ ຕ້ອງໄດ້ຮັບອະນຸຍາດຈາກ ກົມຄື້ນຄວາມຖີ່ (ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ) ຫຼື ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງເສຍກ່ອນ.

ສຳລັບເຄື່ອງທວນສັນຍານ (Reapeater) ຕ້ອງຂໍອະນຸຍາດນຳເຂົ້າຈາກກົມຄື້ນຄວາມຖີ່ (ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ) ເທົ່ານັ້ນ.

## II. ການຂຶ້ນທະບຽນນຳໃຊ້ອຸປະກອນສື່ສານລະບົບໄຟນີ້.

1. ການນຳໃຊ້ອຸປະກອນສື່ສານລະບົບໄຟນີ້ ແບບ Simplex. (ການນຳໃຊ້ຄື້ນຄວາມຖີ່ດຽວໃນການສື່ສານ)

   ຜູ້ທີ່ມີຈຸດປະສົງຂຶ້ນທະບຽນນຳໃຊ້ ຫຼື ຕໍ່ໃບອະນຸຍາດນຳໃຊ້ອຸປະກອນສື່ສານລະບົບໄຟນີ້ ແບບ Simplex ຕ້ອງຂໍອະນຸຍາດຈາກພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ.

2. ການນຳໃຊ້ອຸປະກອນສື່ສານລະບົບໄຟນີ້ ແບບ Duplex. (ການນຳໃຊ້ສອງຄື້ນຄວາມຖີ່ໃນການສື່ສານ)

   ຜູ້ທີ່ມີຈຸດປະສົງຂຶ້ນທະບຽນນຳໃຊ້ອຸປະກອນສື່ສານລະບົບໄຟນີ້ ແບບ Duplex ຕ້ອງຂໍອະນຸຍາດຈາກກົມຄື້ນຄວາມຖີ່ (ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ). ສຳລັບການຕໍ່ໃບອະນຸຍາດນຳໃຊ້ໃນປີຕໍ່ໄປແມ່ນສາມາດຕໍ່ນຳ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ.

ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ, ຖະໜົນລ້ານຊ້າງ 01000 ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ: (+856-21) 218927 ອີເມວ: mail@mpt.gov.la

III. ການປະກອບເອກະສານໃນການຂໍອະນຸຍາດນຳເຂົ້າ ແລະ ຂໍຂຶ້ນທະບຽນນຳໃຊ້ອຸປະກອນສື່ສານລະບົບໄຟບີ.

ການປະກອບເອກະສານໃນການຂໍອະນຸຍາດນຳເຂົ້າ ແລະ ຂໍຂຶ້ນທະບຽນນຳໃຊ້ອຸປະກອນສື່ສານລະບົບໄຟບີ້ ຕ້ອງປະກອບເອກະສານ ດັ່ງນີ້:

- ໃບສະເໜີຂໍອະນຸຍາດນຳເຂົ້າ ຫຼື ໃບສະເໜີຂຶ້ນທະບຽນນຳໃຊ້ ຫຼື ໃບສະເໜີຕໍ່ໃບອະນຸຍາດນຳໃຊ້ອຸປະກອນສື່ສານລະບົບໄຟບີ້ (ຈາກພາກສ່ວນທີ່ມາຂໍອະນຸຍາດ) 1 ສະບັບ;
- ສຳເນົາທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນອາກອນ (ຖ້າມີ) 1 ສະບັບ;
- ໃບອະນຸຍາດດຳເນີນທຸລະກິດ (ສຳລັບບໍລິສັດ/ລັດວິສາຫະກິດ) (ຖ້າມີ) 1 ສະບັບ;
- ສຳເນົາບັດປະຈຳຕົວ 1 ສະບັບ;
- ເອກະສານຂໍ້ມູນທາງດ້ານເຕັກນິກຂອງອຸປະກອນສື່ສານລະບົບໄຟບີ້ 1 ສະບັບ;
- ແບບຟອມທາງດ້ານເຕັກນິກ (ຈາກກົມຄຸ້ມຄອງທີ່ ຫຼື ພະແນກ ປທສ ແຂວງ/ນະຄອນຫຼວງ) 1 ສະບັບ.

IV. ການຈັດຕັ້ງປະຕິບັດ.

ກົມຄຸ້ມຄອງທີ່ (ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ) ຫຼື ພະແນກ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໜ້າທີ່ ແລະ ຂອບເຂດສິດຂອງຕົນດັ່ງນີ້:

1. ປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ໃຫ້ທຸກພາກສ່ວນແຕ່ສູນກາງຮອດທ້ອງຖິ່ນໃຫ້ທົ່ວເຖິງໃນຂອບເຂດປະເທດ;
2. ປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ ແລະ ຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ຢ່າງເຂັ້ມງວດ;
3. ສຳລັບອຸປະກອນສື່ສານລະບົບໄຟບີ້ທີ່ຍັງບໍ່ໄດ້ຂຶ້ນທະບຽນຕ້ອງຮີບຮ້ອນໄປຂໍຂຶ້ນທະບຽນທີ່ ກົມຄຸ້ມຄອງທີ່ (ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ) ຫຼື ພະແນກໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ພາຍໃນ 30 ວັນລັດຖະການ ນັບແຕ່ວັນລົງລາຍເຊັນ ແຈ້ງການສະບັບນີ້ເປັນຕົ້ນໄປ, ຫຼັງຈາກນັ້ນຖ້າກວດກາພົບເຫັນ ອຸປະກອນສື່ສານລະບົບໄຟບີ້ ທີ່ນຳເຂົ້າ ຫຼື ນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝຕາມກົດໝາຍວ່າດ້ວຍຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ ມາດຕາ 73 ມາດຕະການປັບໃໝ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

V. ການລົບລ້າງແຈ້ງການສະບັບເກົ່າ.

1. ລົບລ້າງແຈ້ງການ ເລື່ອງການນຳເຂົ້າ, ການຈຳໜ່າຍ ແລະ ການນຳໃຊ້ ເຄື່ອງວິທະຍຸສື່ສານ (ເຄື່ອງສື່ສານໄຟບີ້) ສະບັບເລກທີ 1229/ປທສ.ຫກ, ລົງວັນທີ 13 ສິງຫາ 2013;
2. ລົບລ້າງແຈ້ງການ ເລື່ອງ ການຂຶ້ນທະບຽນນຳໃຊ້ ຫຼື ຕໍ່ໃບອະນຸຍາດນຳໃຊ້ ອຸປະກອນສື່ສານລະບົບໄຟບີ້ ສະບັບເລກທີ 230/ປທສ.ຫກ, ລົງວັນທີ 01 ກຸມພາ 2016.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ, ບໍລິສັດ, ໂຮງແຮມ ແລະ ຫ້າງຮ້ານໃນຂອບເຂດທົ່ວປະເທດ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການ ສະບັບນີ້ຢ່າງເຂັ້ມງວດ, ນັບແຕ່ມື້ແຈ້ງການນີ້ເປັນຕົ້ນໄປ.

ຮ.ທ. ຫົວໜ້າຫ້ອງການ

ວິລະໄຊ ດາລາລອຍ